## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 24 ມີນາ 2024 (03-24-2024)

---

# ຄວາມຕາຍຂອງພຣະເຢຊູ

**ຈຸດສຳຄັນໃນບົດຮຽນ:** ພຣະເຢຊູໄດ້ເສັຽສຣະຊີວິດຂອງພຣະອົງເພື່ອຊຳລະໜີ້ຄວາມບາບຂອງພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຍອດສະເລັ່ຽໜີ້ສິນເງິນຂອງຄົນອະເມຣິກັນແມ່ນ $96,371 ຕໍ່ຄົນ. ຈຳນວນທີ່ກ່າວນີ້ກໍມາຈາກແຫຼ່ງທີ່ແຕກຕ່າງກັນ, ລວມທັງບັດເຄຣດິດ, ເງິນກູ້ຢືມຊື້ລົດ, ເງິນກູ້ຢືມທຶນການສຶກສາ, ແລະເງິນກູ້ຢືມເພື່ອຊື້ບ້ານພັກອາສັຍ. ແລະໃນຂນະທີ່ບາງແຫຼ່ງຂອງໜີ້ສິນກໍມີຄວາມເສັຽຫາຍຫຼາຍລຸດລົ່ນກັນ, ຜູ້ໃຫ່ຽສ່ວນຫຼາຍຮູ້ດີການໃຊ້ຊີວິດທີ່ເປັນໜີ້ສິນບາງຢ່າງຕໍ່ໃຜບາງຄົນໃນແຕ່ລະເດືອນວ່າເປັນແນວໃດ. ໃນຂນະທີ່ພວກເຮົາໄດ້ເຮັດຄວາມຄິດມີໜີ້ໃຫ້ກາຍເປັນທີ່ເຄີຍຊິນ, ມັນກໍຍັງເປັນການສົດຊື່ນທີ່ຈະຄິດວ່າຊີວິດຈະເປັນແນວໃດໃນການເປັນອິດສຣະແລະປອດຈາກໜີ້ສິ້ນທັງໝົດ. ມັນແມ່ນຄວາມທ້ອງໃຫ້ຄິດກ່ຽວກັບຫຼາຍໆຊ່ອງທາງໃນຄວາມສາມາດທີ່ຈະໃຊ້ເງິນ ຖ້າບໍ່ໄດ້ຈ່າຍເງິນໃຫ້ກັບແຫຼ່ງໜີ້ສິ້ນບາງຢ່າງໃນແຕ່ລະເດືອນ. ແລະເຖິງປານນັ້ນການທີ່ຈະໃຫ້ໜີ້ສິ້ນໝົດໄປມັນເກີດຂຶ້ນໂດຍຜ່ານລະບຽບວິນັຍແລະຄວາມພຍາຍາມເທົ່ານັ້ນ; ຈຳນວນໜີ້ທັງໝົດຈະຫຼຸດລົງກໍໂດຍຜ່ານຂັ້ນຕອນຂນາດນ້ອຍທີ່ຕ້ອງເຮັດໃນແຕ່ລະເດືອນເທົ່ານັ້ນ, ແລະຈົນກວ່າມັນຈະໝົດໄປ, ທີ່ບຸກຄົນໃດມີຄວາມຕ້ອງການປົດໜີ້ສິນທີ່ຍັງປົກຄຸມພວກເຂົາ. ແຕ່ໜີ້ສິນນີ້ເປັນພຽງເງົາຂອງໜີ້ສິນທີ່ຍິ່ງໃຫ່ຽທີ່ທຸກຄົນເປັນໜີ້-ໜີ້ສິນຂອງຄວາມບາບ, ທີ່ໄດ້ສະສົມມາຕລອດຊີວິດຂອງການເລືອກທີ່ກະບົດຕໍ່ພຣະເຈົ້າອົງຊົງບໍຣິສຸດ, ບໍ່ເໝືອນກັບໜີ້ສິນທັງປວງຂອງພວກເຮົາ, ໜີ້ສິນຂອງບາບບໍ່ສາມາດຖືກລຶບລ້າງດ້ວຍຄວາມພຍາຍາມຂອງຕົນເອງ. ມັນຕ້ອງໄດ້ຈ່າຍ, ຄຳຖາມດຽວທີ່ມີຢູ່ກໍຄື, ໃຜຈະຈ່າຍຄ່າຄວາມບາບນັ້ນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## <u>ສຶກສາພຣະຄັມພີ</u>

### 1. ລູກາ 23:32-34

*32. ມີອີກສອງຄົນທີ່ເປັນຜູ້ຮ້າຍ ຊຶ່ງເຂົາໄດ້ຄຸມມາເໝືອນກັນເພື່ອຂ້າເສັຽພ້ອມກັບພຣະອົງ. 33. ເມື່ອມາເຖິງບ່ອນນຶ່ງທີ່ເອີ້ນວ່າກະ*
*ໂຫລກຫົວ ເຂົາກໍຄຶງພຣະອົງໄວ້ບ່ອນນັ້ນທີ່ໄມ້ກາງແຂນ ພ້ອມກັບຜູ້ຮ້າຍສອງຄົນ ເບື້ອງຂວາຄົນນຶ່ງ, ເບື້ອງຊ້າຍຄົນນຶ່ງ. 34. ຝ່າຍ*
*ພຣະເຢຊູຈຶ່ງຊົງອ້ອນວອນວ່າ, "ໂອ ພຣະບິດາເຈົ້າ, ຂໍໂຜດອະພັຍໂທດເຂົາ ເພາະວ່າເຂົາບໍ່ຮູ້ຈັກວ່າເຂົາກຳລັງເຮັດອັນໃດ" ແລ້ວ*
*ເຂົາໄດ້ເອົາເຄື່ອງທົງຂອງພຣະອົງໄປຈົກສລາກແບ່ງປັນກັນ.*

ໄມ້ກາງແຂນສາມອັນຕັ້ງຢູ່ເທິງພູນອກກຸງເຢຣູຊາເລັມ. ຕາເວັນມືດມົນທັງວັນພ້ອມກັບຝູງຊົນທີ່ກຳລັງເປັນພຍານການປະຫານຊີວິດ. ແຕ່ບໍ່ເປັນສິ່ງທີ່ສຳຄັນປານໃດກັບສະຖານທີ່ເກີດຂຶ້ນ, ມັນເປັນຈຸດໃຈກາງຄວາມເຊື່ອຂອງພວກເຮົາ, ເປັນຈຸດຈົບຂອງແຜນການຂອງພຣະເຈົ້າເພື່ອແກ້ໄຂໜີ້ສິນຂອງຄວາມບາບ. ການສະແດງໃຫ້ເຫັນຕົວປະກອບທີ່ມີຢູ່ໃນຂນະນີ້ເປັນການພັນລະນາຢ່າງແຈ່ມແຈ້ງຂອງທັງພຣະຄຸນຂອງພຣະເຈົ້າແລະຄ່າໃຊ້ໜີ້ອັນຍິ່ງໃຫ່ຽຂອງຄວາມບາບ. ດັ່ງນັ້ນ, ແມ່ນຜູ້ໃດທີ່ພວກເຮົາເຫັນຢູ່ທີ່ເທິງພູໃນມື້ນັ້ນ?

➢ **ຜູ້ຮ້າຍ.** ພຣະເຢຊູບໍ່ໄດ້ຖືກຄຶງຢ່າງໂດດດ່ຽວ, ສອງຂ້າງຂອງພຣະອົງແມ່ນນັກໂທດ, ຜູ້ທີ່ໄດ້ຖືກຈັບ, ຖືກສອບສວນ, ແລະຖືກຕັດສິນລົງໂທດສຳລັບຄວາມຜິດຂອງພວກເຂົາ. ເຖິງແມ່ນວ່າພວກເຮົາບໍ່ຮູ້ຈັກແນ່ນອນວ່າຄວາມຜິດຂອງພວກເຂົາ, ພວກເຮົາສາມາດສັນນິຖານວ່າໂທດນັ້ນຮ້າຍແຮງ, ຂນະທີ່ການຄຶງທີ່ໄມ້ກາງແຂນແມ່ນມີໄວ້ສຳລັບຄະດີທີ່ຮ້າຍແຮງທີ່ສຸດ. ພວກເຮົາຍັງຮູ້ຕື່ມອີກວ່າ, ອີງຕາມຄຳເວົ້າຂອງຜູ້ຮ້າຍຄົນນຶ່ງວ່າ, ການລົງໂທດຂອງພວກເຂົາກໍຖືກຕ້ອງແລ້ວ. ນີ້ບໍ່ແມ່ນໃນກໍລະນີຂອງຊາຍຄົນນຶ່ງທີ່ບໍຣິສຸດຖືກລົງ

ໂທດຢ່າງຜິດໆແຕ່ວ່າຜູ້ເຮັດຄວາມຜິດກໍກຳລັງໄດ້ຮັບການລົງໂທດຢ່າງຖືກຕ້ອງ. ພວກຊາຍເຫຼົ່ານີ້ໄດ້ເຕືອນໃຈພວກເຮົາວ່າພວກເຂົາແຕ່ລະຄົນຈະຕ້ອງໄດ້ຮັບຜົນຂອງການເຮັດຜິດ; ແທ້ຈິງແລ້ວ, ນຶ່ງໃນຈຸດປະສົງຂອງສັງຄົມແມ່ນເພື່ອແຈກຈ່າຍມາດຕະການຄວາມຍຸຕິທັມສຳລັບການກະທຳຜິດດັ່ງກ່າວ. ແນ່ນອນ, ລະບົບຄວາມຍຸຕິທັມໃນໂລກນີ້ບໍ່ສົມບູນແບບ. ປະຈຸບັນ, ປໂຍກນີ້ມັນຈະເບົາເກີນໄປຫຼືຈະໜັກເກີນໄປ, ແລະໃນຫຼາຍໆຄັ້ງຄົນທີ່ບໍ່ມີຄວາມຜິດກໍໄດ້ຖືກໂທດ. ມີບັນຫາຄວາມອະຄະຕິ, ຄວາມລຳອຽງ, ແລະການແກ້ແຄ້ນທີ່ທຳລາຍລະບົບຄວາມຍຸຕິທັມໃນໂລກນີ້. ແຕ່ຄົນເຫຼົ່ານີ້ຍັງເປັນການເຕືອນໃຈວ່າບໍ່ມີເຣື່ອງອັນໃດທີ່ບໍ່ເປັນທັມໃນລະບົບການພິພາກສາຂອງພຣະເຈົ້າ. ພຣະອົງເປັນຜູ້ຕັດສິນທີ່ສົມບູນແບບ, ແລະການລົງໂທດທີ່ພຣະອົງຕັດສິນນັ້ນຈຶ່ງຍຸຕິທັມ. ຄວາມບາບ, ຍ້ອນການກະບົດທີ່ຍິ່ງໃຫ່ຽຕໍ່ພຣະເຈົ້າອົງສົມບູນແບບແລະບໍຣິສຸດ, ມັນຈະຕ້ອງມີການລົງໂທດ.

➢ **ພຣະເຢຊູ.** ຕົວປະກອບທີສອງທີ່ພວກເຮົາພົບເຫັນຢູ່ເທິງພູແມ່ນພຣະເຢຊູ. ບໍ່ຄືກັບພວກຜູ້ຮ້າຍ, ພຣະເຢຊູບໍ່ໄດ້ຖືກຕັດສິນລົງໂທດຢ່າງຍຸຕິທັມ, ພຣະອົງບໍ່ໄດ້ກະທຳຄວາມຜິດແລະມັນເປັນເວລາກາງຄືນ, ສານຕັດສິນໂດຍຄວາມຄິດເຫັນຂອງມະຫາຊົນທີ່ເຮັດໃຫ້ພຣະອົງໄປສູ່ໄມ້ກາງແຂນໃນມື້ນັ້ນ. ແຕ່ພວກເຮົາຄວນຈະລະມັດລະວັງ, ເຖິງແມ່ນວ່າຄວາມບໍ່ຍຸຕິທັມທີ່ສຳແດງຢູ່ເທິງໄມ້ກາງແຂນ, ພວກເຮົາບໍ່ຄວນຄິດວ່າພຣະເຢຊູເປັນຜູ້ຖືກເຄາະຮ້າຍຈາກສະຖານະການທີ່ໂສກເສົ້າ. ພຣະເຢຊູຢູ່ທີ່ເທິງໄມ້ກາງແຂນຕາມທີ່ພຣະອົງຕັ້ງໃຈເພາະວ່າພຣະອົງໄດ້ໄປບ່ອນທີ່ພຣະບິດາມີພຣະປະສົງໃຫ້ພຣະອົງຢູ່: "ຊາວອິສຣາເອນທັງຫຼາຍເອີຍ, ຈົ່ງຟັງຖ້ອຍຄຳເຫຼົ່ານີ້ ຄືເຢຊູໄທນາຊາເຣັດເປັນຜູ້ທີ່ພຣະເຈົ້າຊົງຊີ້ແຈງໃຫ້ພວກທ່ານຮູ້ດ້ວຍການອິດທິຣິດ, ການອັສຈັນແລະໝາຍສຳຄັນຕ່າງໆຊຶ່ງພຣະເຈົ້າໄດ້ຊົງກະທຳໃນຖ້າມກາງພວກທ່ານດ້ວຍທ່ານຜູ້ນັ້ນດັ່ງທີ່ພວກທ່ານຮູ້ຢູ່ແລ້ວ. ທ່ານຜູ້ນີ້ໄດ້ຖືກມອບໄວ້ຕາມທີ່ພຣະເຈົ້າໄດ້ຊົງກຳນົດຄາດໝາຍແລະຊົງຮູ້ໄວ້ລ່ວງໜ້າກ່ອນນັ້ນພວກທ່ານໄດ້ໃຫ້ຄົນນອກສາສນາຄຶງເພິ່ນໄວ້ທີ່ໄມ້ກາງແຂນແລະປະຫານຊີວິດເສັຽ (ກຈກ 2:22-33). ການຖືກຄຶງຂອງພຣະເຢຊູຢູ່ທີ່ໄມ້ກາງແຂນແມ່ນການບັນລຸແຜນການຂອງພຣະເຈົ້າ. ນີ້ແມ່ນຈຸດໝາຍປາຍທາງຂອງພຣະອົງ, ແລະພຣະເຢຊູກໍ່ຮູ້ຈັກດີ. ພຣະອົງມຸ້ງໝັ້ນທີ່ຈະດຳເນີນຊີວິດຕາມພຣະບັນຊາທີ່ພຣະເຈົ້າໄດ້ມອບໝາຍໃຫ້, ຊຶ່ງຈະເຮັດໃຫ້ເກີດການໃຫ້ອະພັຍບາບ, ພວກເຮົາເຫັນຕົວຢ່າງຂອງການໃຫ້ອະພັຍທີ່ສະແດງອອກໃນຂນະທີ່ພຣະເຢຊູ, ຢູ່ໃນຄວາມທຸກທໍລະມານຂອງພຣະອົງ, ມີຄວາມລອດຂອງມະນຸດຢູ່ໃນໃຈຂອງພຣະອົງ. ໃນການສຳແດງຄວາມເມດຕາອັນໜ້າອັສຈັນນີ້, ພຣະອົງໄດ້ຮ້ອງໄຫ້ແທນຜູ້ທີ່ກົ້ມຫົວໃສ່ການຕາຍຂອງພຣະອົງ. ສິ່ງນີ້ໄດ້ນຳພາພວກເຮົາໄປຫາບຸກຄົນທີ່ສາມຂອງຕົວປະກອບ.

➢ **ພວກເຮົາ.** ໃນຝ່າຍທາງວິນຍານ, ພວກເຮົາ, ກໍຄືກັນ, ຢູ່ທີ່ໄມ້ກາງແຂນນັ້ນ. ພວກເຮົາເຫັນຕົວເຮົາເອງຢູ່ໃນກຸ່ມກັບພວກຜູ້ຮ້າຍ, ເພາະພວກເຮົາຍັງໄດ້ຮັບການກ່າວໂທດຢ່າງຍຸຕິທັມສຳລັບບາບຂອງພວກເຮົາແລະການລົງໂທດສຳລັບບາບນັ້ນຄືຄວາມຕາຍ. ແລະພວກເຮົາພົບຕົນເອງຢູ່ໃນຝູງຊົນທີ່, ເຖິງແມ່ນວ່າພຣະເຢຊູຈະສິ້ນພຣະຊົນເພື່ອເຂົາ, ປານນັ້ນເຂົາຍັງຮ້ອງບອກໃຫ້ປະຫານຊີວິດຂອງພຣະອົງເສັຽ. ນີ້ແມ່ນຄວາມມືດທີ່ແທ້ຈິງຂອງສະຖານະການຂອງພວກເຮົາ; ພວກເຮົາໄດ້ຫຼົງຫາຍໃນຄວາມບາບຂອງພວກເຮົາແລະຈົນພວກເຮົາບໍ່ເຫັນຄວາມຕ້ອງການອັນຈຳເປັນຂອງພວກເຮົາ.

## 2. ລູກາ 23:35-43.

*35. ຝ່າຍປະຊາຊົນກໍຢືນເບິ່ງແລະພວກເຈົ້ານາຍໄດ້ເຍາະເຍີ້ຍພຣະອົງວ່າ, "ມັນໄດ້ຊ່ອຍຄົນອື່ນໃຫ້ລອດພົ້ນ ຖ້າຄົນນີ້ເປັນພຣະຄຣິດ*
*ທີ່ພຣະເຈົ້າໄດ້ຊົງເລືອກໄວ້ນັ້ນໃຫ້ມັນຊ່ອຍຕົນເອງເສັຽ." 36. ພວກທະຫານໄດ້ເຍາະເຍີ້ຍພຣະອົງເໝືອນກັນ ເຂົາໄດ້ເຂົ້າມາເອົາເຫຼົ້າ*
*ແວງສົ້ມຖວາຍພຣະອົງ. 37. ໂດຍເວົ້າວ່າ, "ຖ້າເຈົ້າເປັນກະສັດຊາດຢິວ ຈົ່ງຊ່ອຍຕົວເອງໃຫ້ພົ້ນເສັຽ." 38. ແລະມີຄຳຂຽນໄວ້ເທິງ*
*ພຣະອົງວ່າ, "ຜູ້ນີ້ຄືກະສັດຂອງຊາດຢິວ." 39. ຝ່າຍຄົນນຶ່ງໃນຜູ້ຮ້າຍທີ່ຖືກຄຶງໄວ້ ໄດ້ເວົ້າໝິ່ນປມາດຕໍ່ພຣະອົງວ່າ, "ເຈົ້າເປັນພຣະ*
*ຄຣິດ ບໍ່ແມ່ນຫຼື ຈົ່ງຊ່ອຍຕົນເອງກັບຊ່ອຍເຮົາໃຫ້ພົ້ນເສັຽ." 40. ແຕ່ຄົນນຶ່ງໄດ້ຫ້າມວ່າ, "ໂຕບໍ່ຢ້ານພຣະເຈົ້າຫຼືເພາະໂຕກໍຖືກໂທດ*
*ເໝືອນກັນ. 41. ຝ່າຍເຮົາກໍສົມກັບໂທດນັ້ນແທ້ ເພາະເຮົາກຳລັງໄດ້ຮັບສົມກັບການທີ່ເຮົາເຮັດນັ້ນ ແຕ່ຜູ້ນີ້ບໍ່ໄດ້ເຮັດຜິດອັນໃດ." 42.*
*ແລ້ວຄົນນັ້ນຈຶ່ງທູນວ່າ, "ພຣະເຢຊູເອີຍ, ເມື່ອໃດທ່ານມາໃນແຜ່ນດິນຂອງທ່ານ ຂໍຈົ່ງລະນຶກເຖິງຂ້ານ້ອຍແດ່." 43. ຝ່າຍພຣະອົງຊົງ*

*ຕອບວ່າ, "ເຮົາບອກທ່ານຕາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂເສີມ."*

ໄມ້ກາງແຂນຂອງພຣະຄຣິດເປັນໄດ້ຫຼາຍຢ່າງ, ມັນເປັນການສຳແດງຄວາມຮັກຂອງພຣະເຈົ້າ. ມັນເປັນການສຳແດງຄວາມຍຸຕິທັມຂອງພຣະເຈົ້າອີກດ້ວຍ. ມັນເປັນຕົວຢ່າງແນວຄວາມຄິດຂອງກຸ່ມນຶ່ງທີ່ກໍ່ຄວາມຫວຸ້ນວາຍ, ແລະມັນເປັນບ່ອນຄົບກັນຂອງສິດອຳນາດຂອງພຣະເຈົ້າແລະການເລືອກຂອງມະນຸດ. ໃນບັນດາສິ່ງທັງໝົດເຫຼົ່ານີ້, ໄມ້ກາງແຂນຍັງເປັນສິ່ງທີ່ໜ້າແປກປລາດໃນທາງອື່ນໆອີກ.

➢ **ກະສັດຂອງຊາວຢິວ.** ນີ້ແມ່ນຂໍ້ຄວາມທີ່ອ່ານຈາກປ້າຍ, ເຊິ່ງຖືກຕອກໃສ່ເທິງໄມ້ກາງແຂນຂອງພຣະເຢຊູ. ເຖິງແມ່ນວ່າປ້າຍນັ້ນມີຄວາມໝາຍເຖິງການເຍາະເຍີ້ຍ, ມັນກໍ່ເປັນປໂຍກແດກດັນຂອງຄຳເວົ້າແຕ່ຢ່າງນ້ອຍສ່ວນນຶ່ງກໍເປັນຄວາມຈິງ. ພຣະເຢຊູໄດ້ເປັນ, ຍັງເປັນ, ກະສັດຂອງຊາວຢິວ, ແຕ່ນັ້ນບໍ່ແມ່ນທັງໝົດ. <u>ພຣະອົງຍັງເປັນກະສັດຂອງຈັກກະວານທັງໝົດ</u>.

➢ **"ຊ່ວຍພຣະອົງເອງແລະພວກເຮົາດ້ວຍ!".** ນີ້ແມ່ນຖ້ອຍຄຳທີ່ນັກໂທດຄົນນຶ່ງໄດ້ຮ້ອງຫາພຣະເຢຊູໃນຂນະທີ່ພວກເຂົາທັງສອງຖືກແຂວນຢູ່ເທິງໄມ້ກາງແຂນຢູ່ນັ້ນ, ແລະໄດ້ເວົ້າຊ້ຳກັນເຖິງສອງເທື່ອໃນຄຳເວົ້ານັ້ນ. ພຣະເຢຊູສາມາດຊ່ວຍພຣະອົງເອງ, ບໍ່ພຽງແຕ່ໃນເວລານີ້, ແຕ່ໃນຊ່ວງເວລາຂອງເວລານີ້ທີ່ນຳໄປເຖິງໄມ້ກາງແຂນ, ແຕ່ສິ່ງທີ່ແປກປລາດອັນທີ່ສອງແມ່ນວ່າພຣະເຢຊູໄດ້ປະຕິເສດທີ່ຈະຊ່ວຍພຣະອົງເອງ, ນັ້ນຄືຄວາມຊັດເຈນເພາະວ່າພຣະອົງມີຈຸດປະສົງເພື່ອຈະຊ່ວຍຄົນອື່ນ. ຄວາມຍຸຕິທັມຂອງພຣະເຈົ້າຮຽກຮ້ອງໃຫ້ມີການຊຳລະບາບ. ຖ້າຫາກພຣະເຢຊູໄດ້ຊ່ວຍໃຫ້ພຣະອົງລອດ, ພຣະອົງຈະໄດ້ກ່າວໂທດບໍ່ພຽງແຕ່ຜູ້ຊາຍທີ່ຮ້ອງຂໍໃຫ້ຊ່ວຍ, ແຕ່ວ່າທຸກຄົນ, <u>ພຣະເຢຊູໄດ້ເລືອກທີ່ຈະບໍ່ຊ່ວຍຕົນເອງເພື່ອຈະໄດ້ຊ່ວຍຄົນອື່ນ</u>. ໄມ້ກາງແຂນ, ເປັນສັນຍາລັກຂອງການດູຖູກແລະຄວາມອັບອາຍ, ຈະກາຍເປັນສັນຍາລັກຂອງຄວາມຫັວງແລະຊັຍຊນະສຳລັບທຸກຄົນທີ່ໄວ້ວາງໃຈໃນພຣະຄຣິດ. ດັ່ງທີ່ໂປໂລໄດ້ຂຽນໃນເວລາຕໍ່ມາ, "ຝ່າຍຄົນທັງຫຼາຍທີ່ກຳລັງຈິບຫາຍນັ້ນເຂົາເຫັນວ່າ ເຣື່ອງໄມ້ກາງແຂນເປັນເຣື່ອງໂງ່ ແຕ່ສຳລັບເຮົາທັງຫຼາຍທີ່ກຳລັງຊົງໂຜດໃຫ້ພົ້ນກໍເຫັນວ່າເປັນຣິດອຳນາດຂອງພຣະເຈົ້າ (1 ໂກຣິນໂທ 1:18). <u>ທຸກຄົນທີ່ຕັດສິນໃຈຮັບເອົາກໍ່ຈະໄດ້ພົ້ນ</u>.

## 3. ລູກາ 23:44-49.

*44. ເວລານັ້ນພໍປະມານທ່ຽງໂມງ ກໍບັງເກີດມືດມົວທົ່ວແຜ່ນດິນຈົນເຖິງເກົ້າໂມງ. 45. ແສງຕາເວັນກໍມືດໄປ ແລະຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເຄິ່ງກາງ. 46. ແລ້ວພຣະເຢຊູຊົງຮ້ອງສຽງດັງກ່າວວ່າ, "ພຣະບິດາເອີຍ, ຂ້ານ້ອຍຂໍຝາກຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ" ເມື່ອຊົງກ່າວຢ່າງນັ້ນແລ້ວກໍສິ້ນພຣະຊົນ. 47. ເມື່ອນາຍຮ້ອຍທະຫານໄດ້ເຫັນການທີ່ເກີດຂຶ້ນນັ້ນ ຈຶ່ງສັຣເສີນພຣະເຈົ້າວ່າ, "ຈິງແທ້ແລ້ວ, ທ່ານຜູ້ນີ້ບໍ່ມີຄວາມຜິດ." 48. ຄົນທັງປວງທີ່ມາຊຸມນຸມເບິ່ງການແປກປລາດນັ້ນ ເມື່ອໄດ້ເຫັນເຫດການທີ່ເກີດຂຶ້ນນັ້ນ ກໍພາກັນຕີເອິກກັບຄືນໄປ. 49. ຄົນທັງຫຼາຍທີ່ຮູ້ຈັກພຣະອົງກັບພວກແມ່ຍິງທີ່ໄດ້ຕາມມາພ້ອມພຣະອົງແຕ່ແຂວງຄາລີເລ ກໍຢືນເບິ່ງການທັງຫຼາຍນີ້ຢູ່ແຕ່ໄກ.*

ເຖິງແມ່ນວ່າຂໍ້ພຣະຄັມພີເຫຼົ່ານີ້ໄດ້ບັນທຶກຊ່ວງເວລາສຸດທ້າຍຂອງຊີວິດພຣະເຢຊູ, ແຕ່ຊ່ວງເວລາເຫຼົ່ານັ້ນເປັນຈຸດສູງສຸດຂອງຊີວິດແລະການຮັບໃຊ້ຂອງພຣະອົງທັງໝົດ. ທຸກສິ່ງທຸກຢ່າງໄດ້ພາໄປຫາໄມ້ກາງແຂນ, ແລະບັດນີ້ໄມ້ກາງແຂນຢູ່ໃກ້ແລ້ວ. ອົງພຣະເຢຊູ, ພຣະບຸດຂອງພຣະເຈົ້າແລະພຣະຜູ້ຊ່ວຍໃຫ້ລອດຂອງໂລກ, ໄດ້ສຣະຊີວິດ, ແລະໃນການເຮັດດັ່ງນັ້ນເປັນການສຳເຣັດໃນການປະຕິບັດງານຮັບໃຊ້ຝ່າຍໂລກຂອງພຣະອົງ. ພຣະບຸດ, ຜູ້ຊົງພຣະຊົນຢູ່ຊົ່ວນິຣັນດອນໃນຄວາມຮັກທີ່ສົມບູນແບບແລະການຮ່ວມສາມະຄີທັມກັບພຣະບິດາແລະພຣະວິນຍານ, ໄດ້ຖືກບົດໃຕ້ນ້ຳໜັກຂອງຄວາມບາບ. ສຳລັບໃນຊົ່ວໂມງເຫຼົ່ານັ້ນຢູ່ທີ່ພູຫົວກະໂຫຼກ, ພຣະເຈົ້າໄດ້ຖອກເທການລົງໂທດອັນຊອບທັມສຳລັບບາບໃສ່ພຣະບຸດຂອງພຣະອົງ, ໃນຄວາມສະຫ່ວາງອັນນັ້ນ, ມີສອງແວ່ນຂຍາຍທີ່ພວກເຮົາສາມາດເບິ່ງຜ່ານເພື່ອໃຫ້ເຫັນສິ່ງທີ່ເກີດຂຶ້ນຢ່າງແທ້ຈິງຢູ່ທີ່ໄມ້ກາງແຂນ.

➢ **ແວ່ນຂຍາຍທີນຶ່ງ: ການໄຖ່ບາບຂອງມະນຸດຊາດ**. ນຶ່ງໃນແວ່ນຂຍາຍທີ່ພວກເຮົາສາມາດໃຊ້ເພື່ອແນມເບິ່ງໄມ້ກາງແຂນແມ່ນກ່ຽວກັບພວກເຮົາ. ເຫດຜົນທີ່ພຣະເຢຊູທົນທຸກທໍລະມານຢ່າງຮ້າຍແຮງກໍເພາະວ່າມັນເປັນລາຄາທີ່ຕ້ອງຈ່າຍໃຫ້ພຣະເຈົ້າເພື່ອຊື້ເຮົາກັບຄືນມາຈາກຄວາມບາບແລະຄວາມຕາຍ. ຄຳວ່າ "ການໄຖ່ບາບ" ໝາຍເຖິງການຊື້ຄືນ. ມັນເປັນຄຳສັບທີ່ໄດ້ຢືມມາຈາກພາສາທີ່ຕລາດຂ້າ

ທາດ. ມັນເປັນລາຄາທີ່ຈ່າຍຊື້ຂ້າທາດຄືນແລະປົດປ່ອຍຂ້າທາດໃຫ້ເປັນອິດສຣະ. ສ່ວນຫຼາຍພວກເຮົາມັກຈະຖືກລໍ້ລວງໃຫ້ລະເລີຍຕໍ່ຄວາມບາບ. ພວກເຮົາເວົ້າກ່ຽວກັບຄວາມບາບ, ເຊື່ອໃນແນວຄວາມຄິດຂອງຄວາມບາບ, ເຖິງແມ່ນຈະເສັຽໃຈ, ແລະພຍາຍາມທີ່ຈະກັບໃຈຈາກບາບຂອງພວກເຮົາ, ແຕ່ພວກເຮົາບໍ່ຄ່ອຍເຫັນຜົນກະທົບທັນທີທັນໃດຂອງຄວາມບາບຂອງພວກເຮົາ, ໂດຍສະເພາະຄວາມບາບນັ້ນມີພຽງແຕ່ພວກເຮົາແລະພຣະເຈົ້າເທົ່ານັ້ນທີ່ຮັບຮູ້. ພວກເຮົາເຮັດບາບ, ພວກເຮົາຮູ້ສຶກບໍ່ດີ, ແລ້ວພວກເຮົາກໍ່ເດີນໄປຕາມທາງຂອງພວກເຮົາ. ໃນລະຍະຂອງເວລາ, ພວກເຮົາຢຸດເຊົາການທີ່ຈະຮູ້ສຶກເຖິງແຮງດຶງດູດຂອງຄວາມບາບຂອງພວກເຮົາເລິກດັ່ງທີ່ພວກເຮົາເຄີຍໄດ້ເຮັດ. ແຕ່ໄມ້ກາງແຂນສະແດງໃຫ້ພວກເຮົາເຫັນວ່າຄວາມບາບຂອງພວກເຮົາຮ້າຍແຮງແທ້ໆ. ເພື່ອຈະນຳພວກເຮົາໃຫ້ກັບຄືນມາຫາພຣະເຈົ້າ, ພຣະເຢຊູໄດ້ແບກຫາບການແບ່ງແຍກນັ້ນແທນເຮົາ, ເມື່ອພວກເຮົາຫຼຽວເບິ່ງໄມ້ກາງແຂນພວກເຮົາຈະເຫັນການລົງໂທດທີ່ພວກເຮົາສົມຄວນໄດ້ຮັບຈາກການຮັບຜິດຊອບ, ແລະເນື່ອງຈາກວ່າ, ໜີ້ສິນຂອງພວກເຮົາຖືກຊໍາລະ. "ສໍາເລັດແລ້ວ,"

- **ແວ່ນຂຍາຍທີສອງ: ຄວາມພໍໃຈຂອງພຣະເຈົ້າ.** ການໄຖ່ບາບຂອງພວກເຮົາເອງບໍ່ແມ່ນແຕ່ແວ່ນຂຍາຍດຽວ ພວກເຮົາຄວນຫຼຽວເບິ່ງຜ່ານໄມ້ກາງແຂນ. ໄມ້ກາງແຂນບໍ່ພຽງແຕ່ (ຫຼືແມ້ກະທັ້ງສ່ວນໃຫ່ຍ) ກ່ຽວກັບສິ່ງທີ່ພວກເຮົາໄດ້ຮັບ: ມັນແທນທີ່ຈະກ່ຽວກັບພຣະເຈົ້າແລະຄວາມຍຸຕິທັມຂອງພຣະອົງ. ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ. ບໍ່ພຽງແຕ່ຄວາມຕາຍທາງຮ່າງກາຍ, ແຕ່ຄວາມຕາຍທາງຝ່າຍຈິດວິນຍານ. ເມື່ອພວກເຮົາຝ່າຝືນພຣະປະສົງທີ່ສົມບູນແບບແລະຄວາມບໍຣິສຸດຂອງພຣະເຈົ້າ, ພວກເຮົາຈະໄດ້ຮັບພຣະພິໂລດແລະຄວາມຍຸຕິທັມອັນສູງສົ່ງຂອງພຣະອົງ. <u>ພວກເຮົາສົມຄວນໄດ້ຮັບຄວາມຕາຍ</u>. ແຕ່ມັນບໍ່ໄດ້ເປັນພຽງແຕ່ບັນຫາອະນາຄົດຂອງມະນຸດທີ່ໄມ້ກາງແຂນ; ມັນແມ່ນພຣະລັກສນະຂອງພຣະເຈົ້າ, ຖ້າພຣະເຈົ້າປະຖິ້ມບາບໂດຍບໍ່ຮັບການລົງໂທດ, ພຣະອົງຈະກາຍເປັນຜູ້ທີ່ປະນີປະນອມຕໍ່ບາບ, "ຄວາມຍຸດຕິທໍາອັນສົມບູນແບບຂອງພຣະອົງໄດ້ຮຽກຮ້ອງໃຫ້ມີການຊໍາລະບາບ, ພຣະເຢຊູບໍ່ພຽງແຕ່ໄດ້ເສັຽສຣະຊີວິດເພື່ອພວກເຮົາ, ແຕ່ພຣະອົງໄດ້ເສັຽຊີວິດເພື່ອຮັກສາພຣະລັກສນະອັນຊອບທັມຂອງພຣະເຈົ້າ.

## ນໍາໃຊ້ໃນຊີວິດ

ພຣະເຢຊູຕາຍເພື່ອຊໍາລະໜີ້ບາບຂອງພວກເຮົາ. ຈົ່ງເລືອກນຶ່ງໃນການນໍາໃຊ້ໃນຊີວິດດັ່ງຕໍ່ລົງໄປນີ້.

- **ຄໍາໝັ້ນສັນຍາທີ່ຈະທ່ອງຈໍາ,** ທ່ອງຈໍາພຣະທັມ 1 ໂກຣິນໂທ 1:18ຂ ເພື່ອເຕືອນທ່ານກ່ຽວກັບເຫດຜົນທີ່ຍິ່ງໃຫ່ຍທີ່ເກີດຂຶ້ນເທິງໄມ້ກາງແຂນ; "ແຕ່ວ່າສໍາລັບພວກເຮົາທີ່ກໍາລັງຊົງໂຜດໃຫ້ພົ້ນກໍເຫັນວ່າເປັນຣິດອໍານາດຂອງພຣະເຈົ້າ."
- **ຕັ້ງໃຈອະທິຖານ.** ໃຫ້ຄໍາໝັ້ນສັນຍາທີ່ຈະອະທິຖານປະຈໍາວັນໃນອາທິດນີ້ສໍາລັບຄົນນຶ່ງທີ່ຢູ່ໃກ້ຊິດກັບທ່ານທີ່ຍັງບໍ່ເຊື່ອໃນຄວາມຕາຍແລະການຟື້ນຄືນຊີວິດຂອງພຣະເຢຊູ. ອະທິຖານໂດຍສະເພາະວ່າພຣະເຈົ້າຈະເປີດຕາຂອງລາວໃນການທໍາງານຂອງພຣະອົງໃນການປະພຶດຂອງລາວ.
- **ຕັ້ງໃຈຮຽນ.** ຈຸດສະເພາະໃດໃນຊີວິດຂອງທ່ານທີ່ທ່ານກໍາລັງຮູ້ສຶກເປັນຫ່ວງໃນຕອນນີ້ແມ່ນຫັຽງ? ໃຊ້ເວລາສິບຫ້ານາທີເພື່ອບັນທຶກກ່ຽວກັບວິທີທີ່ໄມ້ກາງແຂນຂອງພຣະຄຣິດຄວນຈະມີອິດທິພົນຕໍ່ຄວາມໝັ້ນໃຈແລະການກະທໍາຂອງທ່ານໃນສະຖານະການນັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**